ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 254 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 24 ກໍລະກົດ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ), ສະບັບເລກທີ 07/ສພຊ, ລົງວັນທີ 12 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 13/ຄປຈ, ລົງວັນທີ 10 ກໍລະກົດ 2019.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 07 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 12 / 06 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 12 ມິຖຸນາ 2019.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 63 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2019

# ກົດໝາຍ
# ວ່າດ້ວຍອາຊີວະສຶກສາ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາວຽກງານອາຊີວະສຶກສາ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແນໃສ່ສ້າງ ແລະ ພັດທະນາກຳລັງແຮງງານລາວໃຫ້ມີ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ວິໄນແຮງງານ, ຕອບສະໜອງ ຄວາມຕ້ອງການຂອງຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ອາຊີວະສຶກສາ**

ອາຊີວະສຶກສາ ແມ່ນ ການສຶກສາເຕັກນິກວິຊາຊີບ ແລະ ການຝຶກອົບຮົມວິຊາຊີບ ໂດຍມີຈຸດ ໝາຍ ສ້າງ, ພັດທະນາຜູ້ຮຽນວິຊາຊີບໃຫ້ມີ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ວິໄນແຮງງານ, ວິ ຊາຊີບ ແລະ ມີວຽກເຮັດງານທຳ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫຼັກສູດປົກກະຕິ** ໝາຍເຖິງ ຫຼັກສູດວິຊາສະເພາະໃດໜຶ່ງ ທີ່ຈັດຕັ້ງການຮຽນ-ການສອນ ໂດຍທົ່ວໄປໃນລະບົບໂຮງຮຽນ;
2. **ຫຼັກສູດຕໍ່ເນື່ອງ** ໝາຍເຖິງ ຫຼັກສູດ ຊຶ່ງຜູ້ຮຽນວິຊາຊີບ ໄດ້ສືບຕໍ່ຮຽນ ຫຼື ຍົກລະດັບວິຊາຊີບ ທີ່ຕົນໄດ້ຮຽນມາ;
3. **ໂມດູນ (module)** ໝາຍເຖິງ ໜ່ວຍການຮຽນທີ່ມີເນື້ອໃນຄົບຖ້ວນ ດ້ານຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດ ຂອງໜ້າວຽກໃດໜຶ່ງ;

4. **ໜ່ວຍກິດ** ໝາຍເຖິງ ຫົວໜ່ວຍທີ່ສະແດງເຖິງປະລິມານການຮຽນ ໃນແຕ່ລະວິຊາ;

5. **ວຸດທິການສຶກສາວິຊາຊີບ** ໝາຍເຖິງ ລະດັບວຸດທິອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ;

6. **ຜູ້ຮຽນທີ່ມີບັນຫາ** ໝາຍເຖິງ ຜູ້ພິການ, ຜູ້ເສຍອົງຄະ, ຜູ້ຖືກບຳບັດ, ຄຸມຂັງ ຫຼື ດັດສ້າງ;

7. **ຜູ້ດ້ອຍໂອກາດ** ໝາຍເຖິງ ຜູ້ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ຫຼື ບໍ່ມີເງື່ອນໄຂເຂົ້າເຖິງການສຶກສາ;

8. **ຫົວໜ່ວຍແຮງງານ** ໝາຍເຖິງ ຫົວໜ່ວຍທຸລະກິດ, ການຜະລິດ, ການຄ້າ ແລະ ການບໍລິການຂອງທຸກພາກສ່ວນເສດຖະກິດ-ສັງຄົມ ທີ່ໄດ້ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ;

9. **ວິໄນແຮງງານ** ໝາຍເຖິງ ລະບຽບໃນການອອກແຮງງານ;

10. **ສາມລັກສະນະການສຶກສາ** ໝາຍເຖິງ ລັກສະນະຊາດ, ລັກສະນະວິທະຍາສາດ ແລະ ທັນສະໄໝ, ລັກສະນະມະຫາຊົນ;

11. **ຫ້າຫຼັກມູນການສຶກສາ** ໝາຍເຖິງ ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ;

12. **ການຮຽນແບບອັດທະຍາໄສ** ໝາຍເຖິງ ການຮຽນ, ການຄົ້ນຄ້ວາດ້ວຍຕົນເອງ ດ້ວຍຫຼາຍວິທີລວມທັງຜ່ານສື່ຕ່າງໆ ຊຶ່ງບໍ່ຈຳກັດເວລາ, ເນື້ອໃນ ແລະ ສະຖານທີ່ຮຽນ;

13. **ບຸກຄະລາກອນອາຊີວະສຶກສາ** ໝາຍເຖິງ ຜູ້ບໍລິຫານ, ນັກວິຊາການ, ຄູສອນວິຊາຊີບ ແລະ ຜູ້ຮຽນວິຊາຊີບ;

14. **ໜ່ວຍງານກຸ່ມອາຊີບ** ໝາຍເຖິງ ການຈັດຕັ້ງຂະແໜງອາຊີບໃດໜຶ່ງ ທີ່ປະກອບດ້ວຍຕົວແທນຈາກພາກລັດ ແລະ ເອກະຊົນ ເພື່ອສົ່ງເສີມ ແລະ ພັດທະນາ ວຽກງານອາຊີວະສຶກສາ;

15. **ຜູ້ຖືກທົດສອບ** ໝາຍເຖິງ ຜູ້ເຂົ້າມາທົດສອບ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ແລະ ຄຸນສົມບັດຂອງຕົນໃນສາຂາອາຊີບໃດໜຶ່ງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານອາຊີວະສຶກສາ**

ລັດ ສົ່ງເສີມໃຫ້ພົນລະເມືອງລາວທຸກຄົນ ໄດ້ຮັບການສຶກສາ, ການຝຶກອົບຮົມວິຊາຊີບ ໃນສາຂາໃດໜຶ່ງ ໂດຍອີງຕາມສະພາບ ແລະ ເງື່ອນໄຂຕົວຈິງ ຂອງບຸກຄົນ ແລະ ຄອບຄົວ ດ້ວຍການອຸດໜູນການຮຽນໃຫ້ແກ່ຜູ້ຮຽນດີເດັ່ນ, ຜູ້ດ້ອຍໂອກາດ, ຜູ້ຮຽນທີ່ມີບັນຫາ ແລະ ຜູ້ຮຽນໃນສາຂາອາຊີບທີ່ລັດສົ່ງເສີມ.

ລັດ ຈັດສັນງົບປະມານ ໃຫ້ສະຖານອາຊີວະສຶກສາທີ່ລັດສ້າງຕັ້ງຂຶ້ນ.

ລັດ ຊຸກຍູ້, ສົ່ງເສີມດ້ວຍນະໂຍບາຍສິນເຊື່ອ, ການຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ, ອາກອນ ຕາມກົດໝາຍ ເພື່ອໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ລົງທຶນໃສ່ການກໍ່ສ້າງໂຄງລ່າງພື້ນຖານ, ສ້າງຕັ້ງໂຮງຮຽນອາຊີວະສຶກສາ, ສູນຝຶກອົບຮົມວິຊາຊີບ, ປະກອບອຸປະກອນເຕັກນິກ ແລະ ບຸກຄະລາກອນອາຊີວະສຶກສາ ເຂົ້າໃນການຮຽນ-ການສອນວິຊາຊີບ ຢ່າງມີແຜນການ ແລະ ຈຸດສຸມ ລວມທັງການໃຫ້ທຶນກູ້ຢືມດອກເບ້ຍຕ່ຳ ແກ່ນັກຮຽນ-ນັກສຶກສາ ແນໃສ່ສ້າງ ແລະ ພັດທະນາກຳລັງແຮງງານໃຫ້ພຽງພໍ ແລະ ມີຄຸນນະພາບ.

ລັດ ຊຸກຍູ້ ແລະ ເປີດກວ້າງ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຫົວໜ່ວຍແຮງງານ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມເຂົ້າໃນການພັດທະນາວຽກງານອາຊີວະສຶກສາ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານອາຊີວະສຶກສາ**

ວຽກງານອາຊີວະສຶກສາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄື່ອນໄຫວຕາມ ສາມລັກສະນະ, ຫ້າຫຼັກມູນການສຶກສາແຫ່ງຊາດ ແລະ ຮັບປະກັນຄຸນນະພາບ ຕາມມາດຕະຖານອາຊີບ;
2. ຮັບປະກັນການຮຽນທິດສະດີ ໄປຄວບຄູ່ກັບພາກປະຕິບັດຕົວຈິງ, ຄວາມຄ່ອງຕົວ, ການຕໍ່ເນື່ອງ, ການເຊື່ອມຕໍ່ ແລະ ການຮຽນຮູ້ຕະຫຼອດຊີວິດ;
3. ປະຕິບັດຕາມຫຼັກສູດວິຊາຊີບ ແລະ ເຄື່ອນໄຫວ ໃຫ້ສອດຄ່ອງກັບຫຼັກສູດວິຊາຊີບຂອງພາກພື້ນ ແລະ ສາກົນ;
4. ຮັບປະກັນໃຫ້ຜູ້ຮຽນສາມາດປະກອບອາຊີບດ້ວຍຕົນເອງ, ການດຸ່ນດ່ຽງແຮງງານພາຍໃນປະເທດ ແລະ ຕ່າງປະເທດ;
5. ມີຄວາມສະເໝີພາບ ໂດຍບໍ່ຈຳແນກ ເພດ, ໄວ, ເຜົ່າ, ພູມລຳເນົາ ແລະ ຖານະທາງດ້ານເສດຖະກິດ-ສັງຄົມ, ສ້າງເງື່ອນໄຂໃຫ້ຜູ້ດ້ອຍໂອກາດ ແລະ ຜູ້ຮຽນທີ່ມີບັນຫາໄດ້ເຂົ້າຮຽນ ແລະ ໄດ້ຮັບການຝຶກອົບຮົມວິຊາຊີບ;
6. ຮັບປະກັນຄວາມຖືກຕ້ອງ ແລະ ໂປ່ງໃສ ໃນວຽກງານອາຊີວະສຶກສາ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານອາຊີວະສຶກສາ ໃນ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາຊີວະສຶກສາ ດ້ວຍການແລກປ່ຽນບົດຮຽນ, ຍົກລະດັບ ຄວາມຮູ້, ຄວາມສາມາດ ທາງດ້ານວິຊາການ, ເຕັກນິກ, ເຕັກໂນໂລຊີ ແລະ ການຄົ້ນຄວ້າທາງດ້ານວິທະຍາສາດ ເພື່ອພັດທະນາວຽກງານດັ່ງກ່າວໃຫ້ມີຄວາມເຂັ້ມແຂງ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ລະບົບອາຊີວະສຶກສາ

**ມາດຕາ 8 (ປັບປຸງ) ລະບົບອາຊີວະສຶກສາ**

ລະບົບອາຊີວະສຶກສາ ປະກອບດ້ວຍ:

1. ອາຊີວະສຶກສາໃນໂຮງຮຽນ;
2. ອາຊີວະສຶກສານອກໂຮງຮຽນ.

**ມາດຕາ 9 (ປັບປຸງ) ອາຊີວະສຶກສາໃນໂຮງຮຽນ**

ອາຊີວະສຶກສາໃນໂຮງຮຽນ ແມ່ນ ຮູບແບບການຈັດຕັ້ງການຮຽນ-ການສອນ ເຕັກນິກວິຊາຊີບ ແລະ ການຝຶກອົບຮົມວິຊາຊີບດ້ວຍຫຼັກສູດປົກກະຕິຢູ່ໃນໂຮງຮຽນ.

**ມາດຕາ 10 (ປັບປຸງ) ອາຊີວະສຶກສານອກໂຮງຮຽນ**

ອາຊີວະສຶກສານອກໂຮງຮຽນ ແມ່ນ ຮູບແບບການຈັດຕັ້ງການຮຽນ-ການສອນ ເຕັກນິກວິຊາຊີບ ແລະ ການຝຶກອົບຮົມວິຊາຊີບ ຄືກັນກັບອາຊີວະສຶກສາໃນໂຮງຮຽນ ຕ່າງແຕ່ວິທີການຈັດຕັ້ງການຮຽນ-ການສອນ, ເວລາ, ຮູບການຕາມເງື່ອນໄຂຄວາມສາມາດ ແລະ ຄວາມພ້ອມຂອງຜູ້ຮຽນ ລວມທັງການຮຽນແບບອັດທະຍາໄສ.

**ມາດຕາ 11 (ປັບປຸງ) ຮູບແບບການຮຽນອາຊີວະສຶກສາ**

ຮູບແບບການຮຽນອາຊີວະສຶກສາ ປະກອບດ້ວຍ:

1. ຮູບແບບດັ່ງເດີມ ຊຶ່ງແມ່ນ ການຈັດຕັ້ງການຮຽນ-ການສອນ ພາກທິດສະດີ ແລະ ພາກປະຕິບັດໃນສະຖານອາຊີວະສຶກສາເປັນຫຼັກ ແລະ ຝຶກງານ ໃນຫົວໜ່ວຍແຮງງານ;

2. ຮູບແບບສະມັດຖະພາບ ຊຶ່ງແມ່ນ ການຈັດຕັ້ງການຮຽນ-ການສອນ ທີ່ເອົາຜົນການຮຽນເປັນຫຼັກ ແລະ ທົດສອບຕາມມາດຕະຖານອາຊີບ;

3. ຮູບແບບຄວບຄູ່ ຊຶ່ງແມ່ນ ການຈັດຕັ້ງການຮຽນ-ການສອນ ພາກທິດສະດີ ແລະ ພາກປະຕິບັດຂັ້ນພື້ນຖານໃນໂຮງຮຽນ ແລະ ຝຶກແອບປະຕິບັດຕົວຈິງໃນຫົວໜ່ວຍແຮງງານເປັນຕົ້ນຕໍ.

## ພາກທີ III
## ໂຄງປະກອບອາຊີວະສຶກສາ ແລະ ວຸດທິວິຊາຊີບ

**ມາດຕາ 12 ໂຄງປະກອບອາຊີວະສຶກສາ**

ໂຄງປະກອບ ອາຊີວະສຶກສາ ມີ ດັ່ງນີ້:

1. ອາຊີວະສຶກສາ ຂັ້ນຕົ້ນ;
2. ອາຊີວະສຶກສາ ຂັ້ນກາງ;
3. ອາຊີວະສຶກສາ ຂັ້ນສູງ.

### ໝວດທີ 1
### ອາຊີວະສຶກສາຂັ້ນຕົ້ນ

**ມາດຕາ 13 (ປັບປຸງ) ອາຊີວະສຶກສາຂັ້ນຕົ້ນ**

ອາຊີວະສຶກສາຂັ້ນຕົ້ນ ແມ່ນ ການສຶກສາ, ການຝຶກອົບຮົມ ຕາມຫຼັກສູດວິຊາຊີບຂັ້ນຕົ້ນ ທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້ ສຳລັບຜູ້ຮຽນຈົບຂັ້ນປະຖົມສຶກສາ ຫຼື ທຽບເທົ່າຂຶ້ນໄປ ໃຫ້ມີຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດ ເພື່ອປະກອບອາຊີບດ້ວຍຕົນເອງ ຫຼື ເຮັດວຽກໃນຫົວໜ່ວຍແຮງງານ.

**ມາດຕາ 14 (ປັບປຸງ) ຫຼັກສູດວິຊາຊີບຂັ້ນຕົ້ນ**

ຫຼັກສູດວິຊາຊີບຂັ້ນຕົ້ນ ປະກອບດ້ວຍ:

1. ຫຼັກສູດວິຊາຊີບຂັ້ນຕົ້ນລະດັບໜຶ່ງ ຊຶ່ງແມ່ນ ຫຼັກສູດຂັ້ນພື້ນຖານສຳລັບຜູ້ຮຽນຈົບຂັ້ນປະຖົມສຶກສາ ຫຼື ທຽບເທົ່າໂດຍໃຊ້ເວລາຮຽນແຕ່ ສາມເດືອນ ຫາ ຫົກເດືອນ ຕາມວິຊາສະເພາະທີ່ກ່ຽວຂ້ອງ;

2. ຫຼັກສູດວິຊາຊີບຊັ້ນຕົ້ນລະດັບສອງ ຊຶ່ງແມ່ນ ຫຼັກສູດສຳລັບຜູ້ຮຽນຈົບຊັ້ນປະຖົມສຶກສາ ຫຼື ທຽບເທົ່າໂດຍໃຊ້ເວລາຮຽນບໍ່ຫຼຸດ ໜຶ່ງປີ, ສຳລັບ ຜູ້ຮຽນຈົບວິຊາຊີບຊັ້ນຕົ້ນ ລະດັບໜຶ່ງແລ້ວ ໃຫ້ໃຊ້ເວລາຮຽນບໍ່ຫຼຸດ ຫົກເດືອນ;

3. ຫຼັກສູດວິຊາຊີບຊັ້ນຕົ້ນລະດັບສາມ ຊຶ່ງແມ່ນ ຫຼັກສູດສຳລັບຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ຫຼື ທຽບເທົ່າ ຂຶ້ນໄປໂດຍໃຊ້ເວລາຮຽນບໍ່ຫຼຸດ ສອງປີ ໂດຍອີງຕາມວິຊາສະເພາະທີ່ກ່ຽວຂ້ອງ, ສຳລັບ ຜູ້ຮຽນຈົບວິຊາຊີບຊັ້ນຕົ້ນລະດັບສອງແລ້ວ ໃຫ້ໃຊ້ເວລາຮຽນບໍ່ຫຼຸດ ໜຶ່ງປີ.

## ໝວດທີ 2
## ອາຊີວະສຶກສາຊັ້ນກາງ

### ມາດຕາ 15 (ປັບປຸງ) ອາຊີວະສຶກສາຊັ້ນກາງ

ອາຊີວະສຶກສາຊັ້ນກາງ ແມ່ນ ການສຶກສາ, ການຝຶກອົບຮົມ ຕາມຫຼັກສູດວິຊາຊີບຊັ້ນກາງທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ສຳລັບຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ຫຼື ທຽບເທົ່າຂຶ້ນໄປ ຫຼື ຜູ້ຮຽນຈົບວິຊາຊີບຊັ້ນຕົ້ນລະດັບສາມ ໃຫ້ມີຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດ ເພື່ອປະກອບອາຊີບດ້ວຍຕົນເອງ ຫຼື ເຮັດວຽກໃນຫົວໜ່ວຍແຮງງານ.

### ມາດຕາ 16 (ປັບປຸງ) ຫຼັກສູດວິຊາຊີບຊັ້ນກາງ

ຫຼັກສູດວິຊາຊີບຊັ້ນກາງ ປະກອບດ້ວຍ:

1. ຫຼັກສູດສຳລັບຜູ້ຮຽນຈົບວິຊາຊີບຊັ້ນຕົ້ນລະດັບສາມ ໂດຍໃຊ້ເວລາຮຽນບໍ່ຫຼຸດ ໜຶ່ງປີ;
2. ຫຼັກສູດສຳລັບຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ຫຼື ທຽບເທົ່າ ໂດຍໃຊ້ເວລາຮຽນບໍ່ຫຼຸດ ສາມປີ;
3. ຫຼັກສູດສຳລັບຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ໂດຍໃຊ້ເວລາຮຽນບໍ່ຫຼຸດ ສອງປີ.

## ໝວດທີ 3
## ອາຊີວະສຶກສາຊັ້ນສູງ

### ມາດຕາ 17 (ປັບປຸງ) ອາຊີວະສຶກສາຊັ້ນສູງ

ອາຊີວະສຶກສາຊັ້ນສູງ ແມ່ນ ການສຶກສາ, ການຝຶກອົບຮົມ ຕາມຫຼັກສູດວິຊາຊີບຊັ້ນສູງທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້ ສຳລັບຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າຂຶ້ນໄປ ຫຼື ຜູ້ຮຽນຈົບວິຊາຊີບຊັ້ນກາງ ໃຫ້ມີຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດ ເພື່ອປະກອບອາຊີບດ້ວຍຕົນເອງ ຫຼື ເຮັດວຽກໃນຫົວໜ່ວຍແຮງງານ.

### ມາດຕາ 18 (ປັບປຸງ) ຫຼັກສູດວິຊາຊີບຊັ້ນສູງ

ຫຼັກສູດວິຊາຊີບຊັ້ນສູງ ປະກອບດ້ວຍ:

1. ຫຼັກສູດສຳລັບຜູ້ຮຽນຈົບວິຊາຊີບຊັ້ນກາງ ໂດຍໃຊ້ເວລາຮຽນແຕ່ ໜຶ່ງ ຫາ ສອງ ປີ ຕາມແຕ່ລະຂະແໜງວິຊາຊີບ;

2. ຫຼັກສູດສຳລັບຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ໂດຍໃຊ້ເວລາຮຽນບໍ່ຫຼຸດ ສາມປີ.

## ໝວດທີ 4
## ວຸດທິວິຊາຊີບ

**ມາດຕາ 19 (ປັບປຸງ) ວຸດທິວິຊາຊີບ**

ວຸດທິວິຊາຊີບ ແມ່ນ ຄຸນລັກສະນະ ແລະ ຄຸນຄ່າ ຂອງການຮຽນ, ການສຶກສາ ແລະ ການຝຶກອົບຮົມວິຊາຊີບສາຂາໃດໜຶ່ງ ໂດຍມີການຢັ້ງຢືນຢ່າງເປັນທາງການ.

**ມາດຕາ 20 (ປັບປຸງ) ລະດັບວຸດທິວິຊາຊີບ**

ວຸດທິວິຊາຊີບ ປະກອບດ້ວຍ ຫ້າລະດັບ ດັ່ງນີ້:

1. ລະດັບ 1 ແມ່ນ ວິຊາຊີບຊັ້ນຕົ້ນລະດັບ ໜຶ່ງ;
2. ລະດັບ 2 ແມ່ນ ວິຊາຊີບຊັ້ນຕົ້ນລະດັບ ສອງ;
3. ລະດັບ 3 ແມ່ນ ວິຊາຊີບຊັ້ນຕົ້ນລະດັບ ສາມ;
4. ລະດັບ 4 ແມ່ນ ວິຊາຊີບຊັ້ນກາງ;
5. ລະດັບ 5 ແມ່ນ ວິຊາຊີບຊັ້ນສູງ.

ເນື້ອໃນລະອຽດຂອງວຸດທິວິຊາຊີບ ແຕ່ລະ ລະດັບ ໄດ້ກຳນົດໄວ້ໃນຂອບວຸດທິການສຶກສາແຫ່ງຊາດ.

## ພາກທີ IV
## ສະຖານອາຊີວະສຶກສາ
## ໝວດທີ 1
## ປະເພດສະຖານອາຊີວະສຶກສາ

**ມາດຕາ 21 ປະເພດສະຖານອາຊີວະສຶກສາ**

ສະຖານອາຊີວະສຶກສາ ມີ ສີ່ປະເພດ ດັ່ງນີ້:

1. ສູນຝຶກອົບຮົມ;
2. ໂຮງຮຽນ;
3. ວິທະຍາໄລ;
4. ສະຖາບັນ.

**ມາດຕາ 22 (ປັບປຸງ) ສູນຝຶກອົບຮົມ**

ສູນຝຶກອົບຮົມ ແມ່ນ ສະຖານທີ່ຝຶກອົບຮົມລວມທັງຫົວໜ່ວຍແຮງງານ ຊຶ່ງດຳເນີນການຝຶກອົບຮົມວິຊາຊີບ ເພື່ອ ສ້າງ, ບຳລຸງ ແລະ ຍົກລະດັບ ທາງດ້ານວິຊາສະເພາະ ຫຼື ວິຊາການດ້ານໃດດ້ານໜຶ່ງ.

**ມາດຕາ 23 (ປັບປຸງ) ໂຮງຮຽນ**

ໂຮງຮຽນ ແມ່ນ ສະຖານທີ່ ສຶກສາ, ຝຶກອົບຮົມວິຊາຊີບ ເພື່ອສ້າງກຳລັງແຮງງານໃຫ້ມີຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດ ໃນລະດັບອາຊີວະສຶກສາ ຊັ້ນຕົ້ນ, ຊັ້ນກາງ ແລະ ຊັ້ນສູງຕໍ່ເນື່ອງ.

**ມາດຕາ 24 (ປັບປຸງ) ວິທະຍາໄລ**

ວິທະຍາໄລ ແມ່ນ ສະຖານທີ່ ສຶກສາ, ຝຶກອົບຮົມວິຊາຊີບ ເພື່ອສ້າງກຳລັງແຮງງານໃຫ້ມີຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດ ໃນລະດັບອາຊີວະສຶກສາຊັ້ນຕົ້ນ, ຊັ້ນກາງ ແລະ ຊັ້ນສູງ.

**ມາດຕາ 25 (ປັບປຸງ) ສະຖາບັນ**

ສະຖາບັນ ແມ່ນ ສະຖານທີ່ ສຶກສາ, ຄົ້ນຄວ້າວິໄຈ, ພັດທະນາຫຼັກສູດ, ສື່ການຮຽນ-ການສອນ ແລະ ພັດທະນາອາຊີວະສຶກສາ ລວມທັງ ການສ້າງ, ບຳລຸງຄູ ແລະ ຍົກລະດັບບຸກຄະລາກອນອາຊີວະສຶກສາ.

## ໝວດທີ 2
## ການສ້າງຕັ້ງ ແລະ ການຍຸບເລີກ

**ມາດຕາ 26 (ປັບປຸງ) ການສ້າງຕັ້ງສະຖານອາຊີວະສຶກສາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ທີ່ມີຈຸດປະສົງສ້າງຕັ້ງສະຖານອາຊີວະສຶກສາ ຕ້ອງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາການສຶກສາ ແລະ ແຜນພັດທະນາແຮງງານໃນແຕ່ລະໄລຍະ.

ການສ້າງຕັ້ງສະຖານອາຊີວະສຶກສາ ຕ້ອງໃຫ້ຖືກຕາມມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ.

**ມາດຕາ 27 ການອະນຸຍາດສ້າງຕັ້ງສະຖານອາຊີວະສຶກສາ**

ການອະນຸຍາດສ້າງຕັ້ງສະຖານອາຊີວະສຶກສາ ແຕ່ລະປະເພດ ແລະ ແຕ່ລະກໍລະນີ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 28 (ປັບປຸງ) ການຍຸບເລີກສະຖານອາຊີວະສຶກສາ**

ສະຖານອາຊີວະສຶກສາຈະຖືກຍຸບເລີກ ໃນກໍລະນີ ດັ່ງນີ້:

1. ດຳເນີນກິດຈະການທີ່ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ;
2. ບໍ່ ແກ້ໄຂ, ປັບປຸງ ຂໍ້ຜິດພາດໃນການດຳເນີນກິດຈະການ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
3. ມີການສະເໜີ ຂໍຍຸບເລີກ;
4. ຖືກຖອນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງ;
5. ມີກໍລະນີອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ V
# ການປະກັນຄຸນນະພາບອາຊີວະສຶກສາ
## ໝວດທີ 1
## ມາດຕະຖານອາຊີບ

**ມາດຕາ 29 (ປັບປຸງ) ມາດຕະຖານອາຊີບ**

ມາດຕະຖານອາຊີບ ແມ່ນ ບັນທັດຖານດ້ານອາຊີບ ຊຶ່ງກຳນົດຄວາມຮູ້, ຄວາມສາມາດ, ຄວາມຊຳນານງານດ້ານວິຊາຊີບ, ວິໄນແຮງງານ ແລະ ຄຸນສົມບັດ ໃນການປະຕິບັດໜ້າທີ່ວຽກງານ ເພື່ອເປັນບ່ອນອີງໃຫ້ແກ່ການສ້າງຫຼັກສູດ, ການທົດສອບ ແລະ ການຮັບຮອງຄຸນນະພາບຂອງວຽກງານ.

**ມາດຕາ 30 ໂຄງປະກອບຂອງມາດຕະຖານອາຊີບ**

ໂຄງປະກອບຂອງມາດຕະຖານອາຊີບ ປະກອບດ້ວຍ ຊື່ອາຊີບ, ໜ້າທີ່, ວຽກ, ຂັ້ນຕອນການປະຕິບັດ, ຫຼັກເກນ, ຕົວຊີ້ວັດ ແລະ ເງື່ອນໄຂ ຂອງການປະຕິບັດແຕ່ລະວຽກ.

**ມາດຕາ 31 (ປັບປຸງ) ການສ້າງ ແລະ ການພັດທະນາມາດຕະຖານອາຊີບ**

ການສ້າງ ແລະ ການພັດທະນາມາດຕະຖານອາຊີບ ແມ່ນ ຄວາມຮັບຜິດຊອບຂອງ ຂະແໜງການທີ່ກ່ຽວຂ້ອງ ໂດຍມີການປະສານສົມທົບກັບສະມາຄົມວິຊາຊີບ, ກຸ່ມອາຊີບ, ສະຖາບັນການສຶກສາ, ຜູ້ຊ່ຽວຊານດ້ານການສຶກສາ ແລະ ດ້ານແຮງງານ.

ມາດຕະຖານອາຊີບຕ້ອງໄດ້ຮັບການທົບທວນ ແລະ ປັບປຸງ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ເຕັກນິກ-ເຕັກໂນໂລຊີ ໃນແຕ່ລະໄລຍະ.

ການສ້າງ ແລະ ການພັດທະນາມາດຕະຖານອາຊີບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ຫຼັກສູດ

**ມາດຕາ 32 (ປັບປຸງ) ຫຼັກສູດວິຊາຊີບ**

ຫຼັກສູດວິຊາຊີບ ແມ່ນ ເອກະສານທີ່ກຳນົດ ເປົ້າໝາຍ, ໂຄງສ້າງ, ເນື້ອໃນ ແລະ ວິທີການຈັດການຮຽນ-ການສອນ ທີ່ຖືເອົາຜູ້ຮຽນເປັນໃຈກາງ ດ້ວຍການວັດຜົນ ຫຼື ການທົດສອບຄວາມສາມາດຂອງຜູ້ຮຽນຕາມສະພາບຕົວຈິງ ເພື່ອຮັບປະກັນ ຄວາມຮູ້, ຄວາມສາມາດ, ວິໄນແຮງງານ ແລະ ຄຸນສົມບັດທີ່ສອດຄ່ອງກັບມາດຕະຖານອາຊີບ.

**ມາດຕາ 33 (ປັບປຸງ) ການສ້າງ ແລະ ການພັດທະນາຫຼັກສູດ**

ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ສ້າງ, ພັດທະນາ ແລະ ປ່ຽນແປງຫຼັກສູດ ຕາມສາມລັກສະນະ ແລະ ຫ້າຫຼັກມູນການສຶກສາແຫ່ງຊາດ ໂດຍສອດຄ່ອງກັບມາດຕະຖານອາຊີບ, ມາດຕະຖານຫຼັກສູດ ແລະ ສະພາບຕົວຈິງ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມີລັກສະນະຕໍ່ເນື່ອງ ລະຫວ່າງ ຊັ້ນຮຽນຕ່າງໆ ຊຶ່ງສະແດງອອກເປັນປຶ້ມແບບຮຽນ ແລະ ປຶ້ມຄູ່ມື ທີ່ມີລັກສະນະເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ຫຼັກສູດວິຊາຊີບ ຕ້ອງຈັດເປັນໂມດູນ ຊຶ່ງສະສົມຜົນການຮຽນເປັນໜ່ວຍກິດຕາມຫຼັກສູດປົກກະຕິ ແລະ ຕໍ່ເນື່ອງ ໂດຍຮັບປະກັນສັດສ່ວນ ລະຫວ່າງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ດັ່ງນີ້:

1. ຫຼັກສູດວິຊາຊີບຂັ້ນຕົ້ນ: ພາກປະຕິບັດຕົວຈິງ ບໍ່ຫຼຸດ 80% (ແປດສິບສ່ວນຮ້ອຍ) ຂອງເວລາຮຽນທັງໝົດຢູ່ໃນຫຼັກສູດ;

2. ຫຼັກສູດວິຊາຊີບຂັ້ນກາງ: ພາກປະຕິບັດຕົວຈິງ ບໍ່ຫຼຸດ 70% (ເຈັດສິບສ່ວນຮ້ອຍ) ຂອງເວລາຮຽນທັງໝົດຢູ່ໃນຫຼັກສູດ;

3. ຫຼັກສູດວິຊາຊີບຂັ້ນສູງ: ພາກປະຕິບັດຕົວຈິງ ບໍ່ຫຼຸດ 60% (ຫົກສິບສ່ວນຮ້ອຍ) ຂອງເວລາຮຽນທັງໝົດຢູ່ໃນຫຼັກສູດ.

**ມາດຕາ 34 (ປັບປຸງ) ການອະນຸມັດ ແລະ ການຍົກເລີກຫຼັກສູດ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ, ປະກາດໃຊ້ ຫຼື ຍົກເລີກ ຫຼັກສູດວິຊາຊີບ ທຸກລະດັບ.

## ໝວດທີ 3
## ການສອບເສັງ ແລະ ການທົດສອບ

**ມາດຕາ 35 (ປັບປຸງ) ການສອບເສັງ**

ການສອບເສັງ ແມ່ນ ການວັດ ແລະ ການປະເມີນ ຄວາມຮູ້, ຄວາມສາມາດ, ທັກສະວິຊາຊີບ ແລະ ຄຸນສົມບັດ ດ້ວຍຮູບການ ຂຽນ, ໝາຍ, ປາກເປົ່າ ແລະ ປະຕິບັດຕົວຈິງ.

ວິທີການສອບເສັງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 36 (ປັບປຸງ) ການທົດສອບ**

ການທົດສອບ ແມ່ນ ການວັດລະດັບ ຄວາມຮູ້, ຄວາມສາມາດ, ທັກສະວິຊາຊີບ ແລະ ຄຸນສົມບັດໃນສາຂາອາຊີບໃດໜຶ່ງ ເພື່ອຢັ້ງຢືນວຸດທິວິຊາຊີບ ຂອງຜູ້ຮຽນຈົບຫຼັກສູດວິຊາຊີບ ແລະ ຜູ້ມີປະສົບການໃນວຽກງານຕົວຈິງ.

**ມາດຕາ 37 (ປັບປຸງ) ຮູບການ ແລະ ວິທີການທົດສອບ**

ການທົດສອບມີ ຮູບການ ແລະ ວິທີການຕົ້ນຕໍ ດັ່ງນີ້:

1. ປະຕິບັດ ລະບຽບການ ແລະ ຫຼັກການ ຂອງການທົດສອບ;
2. ທົດສອບຕາມມາດຕະຖານອາຊີບ;
3. ດໍາເນີນການທົດສອບພາກທິດສະດີ ແລະ ພາກປະຕິບັດຕົວຈິງ;
4. ຕີລາຄາ ແລະ ປະເມີນ ຜົນຂອງການທົດສອບ ດ້ວຍການໃຫ້ຄະແນນ.

**ມາດຕາ 38 (ປັບປຸງ) ມາດຕະຖານການທົດສອບ**

ການທົດສອບຕ້ອງຮັບປະກັນມາດຕະຖານ ດັ່ງນີ້:

1. ມີຄວາມຮູ້, ຄວາມສາມາດ, ທັກສະວິຊາຊີບ, ວິໄນແຮງງານ ແລະ ຄຸນສົມບັດໃນການປະຕິບັດວຽກງານ;

2. ເລືອກ ແລະ ນຳໃຊ້ ວັດສະດຸ ຢ່າງມີປະສິດທິຜົນ;

3. ນຳໃຊ້ ແລະ ບຳລຸງຮັກສາ ພາຫະນະ ແລະ ວັດຖຸປະກອນ ໃນການປະຕິບັດວຽກງານ ໄດ້ຢ່າງຖືກຕ້ອງ;

4. ປະຕິບັດຕາມຂັ້ນຕອນ, ສຳເລັດຕາມກຳນົດເວລາ, ຮັບປະກັນຄວາມປອດໄພ ແລະ ຮັກສາສະພາບແວດລ້ອມ.

ສຳລັບເງື່ອນໄຂຂອງຜູ້ຖືກທົດສອບ, ການຈັດຕັ້ງການທົດສອບ ແລະ ການຢັ້ງຢືນຜົນຂອງການທົດສອບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 39 (ປັບປຸງ) ການທຽບໂອນ**

ການທຽບໂອນ ແມ່ນ ການສົມທຽບ ແລະ ຮັບຮູ້ ເນື້ອໃນຫຼັກສູດ ຫຼື ປະສົບການ ຂອງຜູ້ຮຽນວິຊາຊີບ ຫຼື ຜູ້ມີວຸດທິອາຊີບໃດໜຶ່ງ ເພື່ອໃຫ້ສາມາດຮຽນຕໍ່ຂະແໜງດຽວກັນໃນລະດັບທີ່ສູງກວ່າ.

ການທຽບໂອນ ສາມາດດຳເນີນຈາກຫຼັກສູດລະດັບຕ່ຳ ໄປຫາຫຼັກສູດລະດັບສູງກວ່າ ແລະ ຫຼັກສູດລະດັບດຽວກັນ ຈາກສະຖານອາຊີວະສຶກສາໜຶ່ງ ໄປຫາສະຖານອາຊີວະສຶກສາອື່ນ.

## ໝວດທີ 4
## ການອອກ ປະກາສະນິຍະບັດ ແລະ ໃບຢັ້ງຢືນ

**ມາດຕາ 40 (ປັບປຸງ) ປະກາສະນິຍະບັດ**

ປະກາສະນິຍະບັດ ແມ່ນ ເອກະສານທາງການທີ່ຢັ້ງຢືນວຸດທິວິຊາຊີບ ແຕ່ລະລະດັບ ດັ່ງນີ້:

1. ປະກາສະນິຍະບັດວິຊາຊີບຊັ້ນຕົ້ນ ອອກໃຫ້ຜູ້ຮຽນຈົບຫຼັກສູດວິຊາຊີບຊັ້ນຕົ້ນ ທຸກລະດັບ;
2. ປະກາສະນິຍະບັດວິຊາຊີບຊັ້ນກາງ ອອກໃຫ້ຜູ້ຮຽນຈົບຫຼັກສູດວິຊາຊີບຊັ້ນກາງ;
3. ປະກາສະນິຍະບັດວິຊາຊີບຊັ້ນສູງ ອອກໃຫ້ຜູ້ຮຽນຈົບຫຼັກສູດວິຊາຊີບຊັ້ນສູງ.

**ມາດຕາ 41 (ປັບປຸງ) ໃບຢັ້ງຢືນ**

ໃບຢັ້ງຢືນ ແມ່ນ ເອກະສານທາງການທີ່ອອກໃຫ້ ຜູ້ສຳເລັດການຝຶກອົບຮົມໄລຍະສັ້ນ ຕ່ຳກວ່າສາມເດືອນ ໃນສາຂາວິຊາຊີບໃດໜຶ່ງ.

**ມາດຕາ 42 (ປັບປຸງ) ການອອກ ປະກາສະນິຍະບັດ ແລະ ໃບຢັ້ງຢືນ**

ສະຖານອາຊີວະສຶກສາທີ່ກ່ຽວຂ້ອງ ເປັນຜູ້ອອກ ປະກາສະນິຍະບັດ ແລະ ໃບຢັ້ງຢືນ.

ປະກາສະນິຍະບັດຊັ້ນຕົ້ນ ລະດັບສາມຂຶ້ນໄປ ຕ້ອງນຳໄປຂຶ້ນທະບຽນຢູ່ ກະຊວງ, ອົງການທີ່ກ່ຽວຂ້ອງຕາມແຕ່ລະກໍລະນີ ເພື່ອຄຸ້ມຄອງ. ສຳລັບປະກາສະນິຍະບັດຊັ້ນຕົ້ນ ລະດັບ ໜຶ່ງ ແລະ ສອງ ຕ້ອງນຳໄປຂຶ້ນທະບຽນຢູ່ພະແນກການ, ອົງການທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນຫຼວງ ຕາມແຕ່ລະກໍລະນີ ເພື່ອຄຸ້ມຄອງ.

## ໝວດທີ 5
## ການແຂ່ງຂັນທັກສະວິຊາຊີບ

**ມາດຕາ 43 (ປັບປຸງ) ການແຂ່ງຂັນ ທັກສະວິຊາຊີບ**

ການແຂ່ງຂັນທັກສະວິຊາຊີບ ແມ່ນ ການແຂ່ງຂັນຄວາມຊໍານານງານ ລະຫວ່າງ ຜູ້ຮຽນວິຊາຊີບດ້ວຍກັນໂດຍແມ່ນ ສະຖາບການການສຶກສາ ພາກລັດ, ພາກເອກະຊົນ ຫຼື ຮ່ວມກັນຈັດ ເພື່ອສົ່ງເສີມ ແລະ ຍົກລະດັບຄຸນນະພາບ ການຮຽນ-ການສອນໃຫ້ທຽບເທົ່າກັບພາກພື້ນ ແລະ ສາກົນ.

**ມາດຕາ 44 (ປັບປຸງ) ການຈັດການແຂ່ງຂັນທັກສະວິຊາຊີບ**

ການແຂ່ງຂັນທັກສະວິຊາຊີບສາມາດຈັດຂຶ້ນ ໃນ ສາມລະດັບ ດັ່ງນີ້:

1. ລະດັບສະຖານການສຶກສາ ສາມາດຈັດຂຶ້ນໄດ້ທຸກເວລາ ຕາມເງື່ອນໄຂ ແລະ ຄວາມອາດສາມາດຕົວຈິງ;
2. ລະດັບພາກ ໃຫ້ດໍາເນີນຢ່າງໜ້ອຍ ສອງປີ ຕໍ່ຄັ້ງ ໂດຍເອົາຜູ້ໄດ້ຮັບການຄັດເລືອກຈາກການແຂ່ງຂັນໃນລະດັບສະຖານການສຶກສາ ເຂົ້າຮ່ວມ;
3. ລະດັບຊາດ ໃຫ້ດໍາເນີນຢ່າງໜ້ອຍ ສອງປີ ຕໍ່ຄັ້ງ ໂດຍເອົາຜູ້ໄດ້ຮັບການຄັດເລືອກຈາກການແຂ່ງຂັນໃນລະດັບພາກ ເຂົ້າຮ່ວມ.

ຜູ້ຊະນະການແຂ່ງຂັນທັກສະວິຊາຊີບ ໃນລະດັບຊາດ ສາມາດເຂົ້າຮ່ວມການແຂ່ງຂັນໃນລະດັບພາກພື້ນ ແລະ ລະດັບສາກົນ.

**ມາດຕາ 45 (ປັບປຸງ) ອົງການຊີ້ນໍາການຈັດການແຂ່ງຂັນທັກສະວິຊາຊີບ**

ກະຊວງສຶກສາທິການ ແລະ ກິລາ ປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ, ອົງການອື່ນທີ່ກ່ຽວຂ້ອງ ຮັບຜິດຊອບຊີ້ນໍາ ແລະ ຄຸ້ມຄອງການຈັດຕັ້ງ ແຂ່ງຂັນທັກສະວິຊາຊີບລະດັບຊາດ, ພາກພື້ນ ແລະ ສາກົນ.

ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ, ພະແນກການ, ອົງການອື່ນທີ່ກ່ຽວຂ້ອງຮັບຜິດຊອບຊີ້ນໍາ ແລະ ຄຸ້ມຄອງການຈັດຕັ້ງແຂ່ງຂັນທັກສະວິຊາຊີບລະດັບສະຖານສຶກສາ ແລະ ພາກ.

## ໝວດທີ 6
## ມາດຕະການປະກັນຄຸນນະພາບ

**ມາດຕາ 46 (ປັບປຸງ) ມາດຕະການປະກັນຄຸນນະພາບ**

ມາດຕະການປະກັນຄຸນນະພາບ ແມ່ນ ວິທີການຕິດຕາມ, ປະເມີນຜົນ ແລະ ກວດສອບວຽກງານອາຊີວະສຶກສາ ຢ່າງເປັນລະບົບ ແລະ ຮອບດ້ານ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄຸນນະພາບ ຕາມມາດຕະຖານອາຊີບທີ່ໄດ້ກໍານົດໄວ້.

**ມາດຕາ 47 (ປັບປຸງ) ກົນໄກການປະກັນຄຸນນະພາບ**

ກົນໄກການປະກັນຄຸນນະພາບ ແມ່ນ ຂັ້ນຕອນການດຳເນີນງານ ທີ່ມີການສຳພັນ ແລະ ເຊື່ອມໂຍງກັນຢ່າງເປັນລະບົບ ເປັນຕົ້ນ ການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນ, ການທົບທວນ ໂດຍນຳໃຊ້ບຸກຄະລາກອນ, ຊັບພະຍາກອນ, ຫຼັກເກນ, ມາດຕະການ, ທິດທາງປະຕິບັດ ແລະ ປັດໄຈທີ່ເປັນກົນໄກໃຫ້ແກ່ການດຳເນີນງານ ເພື່ອບັນລຸເປົ້າໝາຍ.

ກົນໄກການປະກັນຄຸນນະພາບ ມີ ດັ່ງນີ້:

1. ການປະເມີນຕົນເອງ;
2. ການປະເມີນພາຍໃນ;
3. ການປະເມີນພາຍນອກ.

**ມາດຕາ 48 (ປັບປຸງ) ການປະເມີນຕົນເອງ**

ການປະເມີນຕົນເອງ ແມ່ນ ການກວດສອບ ແລະ ການປະເມີນຜົນ ໂດຍສະຖານອາຊີວະສຶກສາ ເພື່ອສົ່ງເສີມ, ປັບປຸງ ແລະ ຍົກສູງຄຸນນະພາບ ການຮຽນ-ການສອນ ຫຼື ການຝຶກອົບຮົມວິຊາຊີບ ຊຶ່ງດຳເນີນຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ.

ການປະເມີນຕົນເອງດຳເນີນໂດຍຄະນະປະເມີນຕົນເອງ ຊຶ່ງປະກອບດ້ວຍ ຄະນະວິຊາການຂອງສະຖານອາຊີວະສຶກສາ, ຕົວແທນອົງການຈັດຕັ້ງມະຫາຊົນ, ຕົວແທນຄູ ແລະ ຕົວແທນຜູ້ຮຽນ.

ວິທີການ ແລະ ເນື້ອໃນ ການປະເມີນຕົນເອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 49 (ປັບປຸງ) ການປະເມີນພາຍໃນ**

ການປະເມີນພາຍໃນ ແມ່ນ ການກວດສອບ, ການປະເມີນຜົນ ໂດຍຂະແໜງການສາຍຕັ້ງຕໍ່ສະຖານອາຊີວະສຶກສາ ທີ່ໄດ້ຜ່ານການປະເມີນຕົນເອງມາແລ້ວ ເພື່ອສົ່ງເສີມ, ປັບປຸງ ແລະ ຍົກສູງຄຸນນະພາບວຽກງານຂອງຕົນ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມາດຕະຖານອາຊີບ ຊຶ່ງຕ້ອງດຳເນີນຢ່າງໜ້ອຍ ສາມປີ ຕໍ່ຄັ້ງ.

ການປະເມີນພາຍໃນ ດຳເນີນໂດຍຄະນະປະເມີນພາຍໃນ ຊຶ່ງປະກອບດ້ວຍ ກົມວິຊາການຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຕົວແທນສະຖານອາຊີວະສຶກສາ.

ວິທີການ ແລະ ເນື້ອໃນ ການປະເມີນພາຍໃນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 50 (ປັບປຸງ) ການປະເມີນພາຍນອກ**

ການປະເມີນພາຍນອກ ແມ່ນ ການດຳເນີນການກວດສອບ ແລະ ການປະເມີນຜົນ ໂດຍອົງການພາຍນອກ ຕໍ່ສະຖານອາຊີວະສຶກສາ ທີ່ໄດ້ຜ່ານການປະເມີນພາຍໃນມາແລ້ວ ເພື່ອສົ່ງເສີມ, ປັບປຸງ ແລະ ຍົກສູງຄຸນນະພາບວຽກງານຂອງຕົນ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມາດຕະຖານອາຊີບຂອງພາກພື້ນ ແລະ ສາກົນ ຊຶ່ງຕ້ອງດຳເນີນ ສາມປີ ຫາ ຫ້າປີ ຕໍ່ຄັ້ງ. ພາຍຫຼັງການປະເມີນຜົນຈາກພາຍນອກແລ້ວ ຕ້ອງແຈ້ງໃຫ້ສະຖານອາຊີວະສຶກສາ ຕາມລະບຽບການ.

ການປະເມີນພາຍນອກ ດຳເນີນໂດຍໜ່ວຍງານສະເພາະກິດທີ່ໄດ້ຮັບການແຕ່ງຕັ້ງຈາກກະຊວງສຶກສາທິການ ແລະ ກິລາ ຫຼື ອົງການປະເມີນອິດສະລະ ພາຍໃນ ຫຼື ຕ່າງປະເທດ.

# ພາກທີ VI
# ບຸກຄະລາກອນອາຊີວະສຶກສາ
## ໝວດທີ 1
## ຜູ້ບໍລິຫານອາຊີວະສຶກສາ

**ມາດຕາ 51 (ປັບປຸງ) ຜູ້ບໍລິຫານ**

ຜູ້ບໍລິຫານ ແມ່ນ ພະນັກງານນໍາພາ ໃນສາຍອາຊີວະສຶກສາ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ຜູ້ບໍລິຫານຂັ້ນກະຊວງ ປະຕິບັດໜ້າທີ່ ນໍາພາ, ຕິດຕາມ ກວດກາ ແລະ ອໍານວຍຄວາມສະດວກຮອບດ້ານ ໃຫ້ແກ່ການບໍລິຫານ ຄຸ້ມຄອງວຽກງານອາຊີວະສຶກສາ ຂັ້ນມະຫາພາກ;

2. ຜູ້ບໍລິຫານຂັ້ນ ແຂວງ ແລະ ເມືອງ ປະຕິບັດໜ້າທີ່ ນໍາພາ, ຕິດຕາມ ກວດກາ, ຊຸກຍູ້ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການບໍລິຫານ ຄຸ້ມຄອງການຮຽນ-ການສອນ ຫຼື ການຝຶກອົບຮົມ ຢູ່ໃນສະຖານອາຊີວະສຶກສາ ພາຍໃນທ້ອງຖິ່ນຂອງຕົນ;

3. ຜູ້ບໍລິຫານຂັ້ນສະຖານອາຊີວະສຶກສາ ປະຕິ ບັດໜ້າທີ່ບໍລິຫານ ຄຸ້ມຄອງການຮຽນ-ການສອນ ຫຼື ການຝຶກອົບຮົມ ຢູ່ໃນຂັ້ນຂອງຕົນ.

**ມາດຕາ 52 (ປັບປຸງ) ນັກວິຊາການ**

ນັກວິຊາການ ແມ່ນ ຜູ້ຄົ້ນຄວ້າ, ຜູ້ໃຫ້ການບໍລິການ ວິຊາການສະເພາະດ້ານກ່ຽວກັບວຽກງານອາຊີວະສຶກສາ.

## ໝວດທີ 2
## ຄູສອນວິຊາຊີບ

**ມາດຕາ 53 ຄູສອນວິຊາຊີບ**

ຄູສອນວິຊາຊີບ ແມ່ນ ຜູ້ປະຕິບັດໜ້າທີ່ ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມ ໃຫ້ແກ່ຜູ້ຮຽນ ຢູ່ສະຖານອາຊີວະສຶກສາ ແລະ ຫົວໜ່ວຍແຮງງານ.

ການຄຸ້ມຄອງຄູສອນວິຊາຊີບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 54 ປະເພດຄູສອນວິຊາຊີບ**

ຄູສອນວິຊາຊີບ ມີ ສອງປະເພດ ດັ່ງນີ້:

1. ຄູສອນພາກທິດສະດີ ແມ່ນ ຜູ້ດໍາເນີນການສອນພາກທິດສະດີ ໃນຫ້ອງຮຽນ ຫຼື ຫ້ອງທົດລອງ;

2. ຄູສອນພາກປະຕິບັດ ແມ່ນ ຜູ້ດໍາເນີນການສອນພາກປະຕິບັດຕົວຈິງ ໃນຫ້ອງຝຶກງານ, ໂຮງຊ່າງ, ຫົວໜ່ວຍແຮງງານ ແລະ ພາກສະໜາມ.

**ມາດຕາ 55 (ປັບປຸງ) ມາດຕະຖານຄູສອນວິຊາຊີບ**

ຄູສອນວິຊາຊີບ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີຫຼັກໝັ້ນ, ທັດສະນະການເມືອງຖືກຕ້ອງ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄຸນສົມບັດ, ມີຈັນຍາບັນ, ມີມະນຸດສໍາພັນທີ່ດີ, ຮັກອາຊີບຄູ ແລະ ເປັນແບບຢ່າງທີ່ດີໃຫ້ແກ່ຜູ້ຮຽນ;

2. ມີຄວາມຮູ້ ແລະ ຄວາມສາມາດ ທາງດ້ານວິຊາສະເພາະ ແລະ ວິຊາຄູ ໂດຍມີປະກາສະນີຍະບັດ ຫຼື ໃບຢັ້ງຢືນ ຢ່າງຖືກຕ້ອງ;

3. ມີຄວາມສາມາດທາງດ້ານ ການສຶກສາອົບຮົມ, ການສິດສອນ, ການວັດຜົນ ແລະ ການປະເມີນຜົນ, ການຄົ້ນຄິດປະດິດສ້າງ ແລະ ພັດທະນາຕົນເອງ, ຮູ້ພາສາຕ່າງປະເທດໃດໜຶ່ງ;

4. ມີສຸຂະພາບດີ.

**ມາດຕາ 56 (ປັບປຸງ) ນາມມະຍົດ ແລະ ຕໍາແໜ່ງວິຊາການ ຄູສອນວິຊາຊີບ**

ຄູສອນວິຊາຊີບ ຢູ່ສະຖານອາຊີວະສຶກສາ ມີ ນາມມະຍົດ ແລະ ຕໍາແໜ່ງວິຊາການຄູ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສຶກສາ.

**ມາດຕາ 57 ສິດ, ໜ້າທີ່ ແລະ ພັນທະ ຂອງຄູສອນວິຊາຊີບ**

ຄູສອນວິຊາຊີບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບການບໍາລຸງ ແລະ ຍົກລະດັບດ້ານຕ່າງໆ ທີ່ກ່ຽວຂ້ອງກັບໜ້າທີ່ ແລະ ວິຊາສະເພາະທີ່ຕົນສອນ;
2. ຄົ້ນຄວ້າ ແລະ ເຂົ້າຮ່ວມການຄົ້ນຄວ້າວິທະຍາສາດຕ່າງໆ ທີ່ກ່ຽວຂ້ອງກັບວິຊາສະເພາະຂອງຕົນ;
3. ບໍລິການວິຊາການ ແກ່ສັງຄົມ ຕາມລະບຽບການ;
4. ປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີ ຂອງຕົນ ຕາມກົດໝາຍ;
5. ໄດ້ຮັບຂໍ້ມູນ ຂ່າວສານ ແລະ ນະໂຍບາຍຕ່າງໆ ກ່ຽວກັບວຽກງານອາຊີວະສຶກສາ;
6. ສອນຕາມຫຼັກສູດທີ່ກໍານົດໄວ້;
7. ຄົ້ນຄວ້າ, ສ້າງ ແລະ ພັດທະນາບົດສອນຂອງຕົນໃຫ້ສອດຄ່ອງກັບສະພາບການປ່ຽນແປງດ້ານຕ່າງໆ ໃນແຕ່ລະໄລຍະ;
8. ຕິດຕາມ, ກວດກາ, ຕີລາຄາ, ວັດຜົນ ແລະ ປະເມີນຜົນ ກ່ຽວກັບການຮຽນ-ການສອນ, ການຝຶກອົບຮົມ ຢ່າງເປັນປະຈໍາ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ຄູສອນວິຊາຊີບ ມີພັນທະ ດັ່ງນີ້:

1. ປະຕິບັດລະບຽບວິໄນຂອງ ສະຖານອາຊີວະສຶກສາ;
2. ນັບຖື ແລະ ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຮຽນ;
3. ປົກປັກຮັກສາວັດຖຸປະກອນ, ສິ່ງອໍານວຍຄວາມສະດວກ ແລະ ສະພາບແວດລ້ອມ ພາຍໃນສະຖານອາຊີວະສຶກສາ;
4. ປະຕິບັດຕາມການສັບຊ້ອນ ແລະ ການມອບໝາຍ ຂອງການຈັດຕັ້ງ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 58 (ປັບປຸງ) ນະໂຍບາຍສະເພາະຕໍ່ຄູສອນວິຊາຊີບ**

ລັດ ເອົາໃຈໃສ່ຍົກລະດັບຊີວິດການເປັນຢູ່, ຖານະທາງສັງຄົມ ແລະ ຍົກລະດັບ ວິຊາສະເພາະ, ຄວາມຮູ້, ຄວາມສາມາດ ຂອງຄູສອນວິຊາຊີບ ຢູ່ເຂດພູດອຍ, ຊົນນະບົດຫ່າງໄກສອກຫຼີກ, ທຸລະກັນດານ, ຄູສອນສຳລັບຜູ້ຮຽນທີ່ມີບັນຫາ, ຄູສອນທີ່ມີຜົນງານດີເດັ່ນ ແລະ ຄູສອນທີ່ມີຫົວຄິດປະດິດສ້າງ ດ້ວຍການໃຫ້ຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃນການປະຕິບັດໜ້າທີ່ຂອງຄູສອນດັ່ງກ່າວ.

ນະໂຍບາຍລະອຽດຕໍ່ຄູສອນວິຊາຊີບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ຜູ້ຮຽນວິຊາຊີບ

**ມາດຕາ 59 (ປັບປຸງ) ຜູ້ຮຽນວິຊາຊີບ**

ຜູ້ຮຽນວິຊາຊີບ ແມ່ນ ຜູ້ກຳລັງຮຽນ ຫຼື ຝຶກອົບຮົມ ໃນສະຖານອາຊີວະສຶກສາ ທັງໃນ ແລະ ນອກໂຮງຮຽນ ລວມທັງຫົວໜ່ວຍແຮງງານ.

**ມາດຕາ 60 (ປັບປຸງ) ຄວາມສະເໝີພາບຂອງຜູ້ຮຽນວິຊາຊີບ**

ຜູ້ຮຽນວິຊາຊີບທຸກຄົນ ໂດຍບໍ່ຈຳແນກ ເພດ, ໄວ, ຊົນເຜົ່າ, ກາຍະພາບ, ຖານະທາງດ້ານເສດຖະກິດ, ພູມລຳເນົາ ແລະ ຖານະທາງສັງຄົມ ລ້ວນແຕ່ມີຄວາມສະເໝີພາບ ໃນການຮຽນ ຫຼື ຝຶກອົບຮົມ, ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີ ເພື່ອພັດທະນາຕົນເອງ ແລະ ຮັບໃຊ້ສັງຄົມ.

**ມາດຕາ 61 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ຮຽນວິຊາຊີບ**

ຜູ້ຮຽນວິຊາຊີບ ມີສິດ ດັ່ງນີ້:

1. ນຳໃຊ້ສະຖານທີ່, ຫ້ອງທົດລອງ ແລະ ວັດຖຸປະກອບການສຶກສາ, ສື່ການຮຽນ ແລະ ແຫຼ່ງຄວາມຮູ້ອື່ນ ຕາມລະບຽບການ;
2. ໄດ້ຮັບການຕີລາຄາ, ປະເມີນຜົນຢ່າງຍຸຕິທຳ ກ່ຽວກັບຄຸນສົມບັດ, ຜົນການຮຽນ ແລະ ການສອບເສັງ;
3. ໄດ້ຮັບການຍົກເວັ້ນການສອບເສັງຈົບວິຊາທີ່ມີຜົນການຮຽນດີເດັ່ນ;
4. ໄດ້ຮັບບູລິມະສິດ ໃນການຮັບນະໂຍບາຍ ເຊັ່ນ ບຳເນັດ ຫຼື ຜົນປະໂຫຍດອື່ນ ຕາມລະບຽບການ;
5. ໄດ້ຮັບປະກາສະນິຍະບັດ ຫຼື ໃບຢັ້ງຢືນການຝຶກອົບຮົມ ເມື່ອສຳເລັດຕາມໂຄງການຫຼັກສູດ;
6. ສະເໜີຄຳຄິດຄຳເຫັນຂອງຕົນຕໍ່ຄູສອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຮຽນວິຊາຊີບ ມີພັນທະ ດັ່ງນີ້:

1. ພັດທະນາຕົນເອງໃຫ້ມີຄວາມຮູ້, ຄວາມສາມາດ, ທັກສະວິຊາຊີບ, ວິໄນແຮງງານ ແລະ ຄຸນສົມບັດຢ່າງສອດຄ່ອງກັບ ສາມລັກສະນະ ແລະ ຫ້າຫຼັກມູນການສຶກສາແຫ່ງຊາດ ເພື່ອໃຫ້ເປັນພົນລະເມືອງດີຂອງຊາດ;

2. ເຂົ້າຮ່ວມກິດຈະກຳ ການຮຽນ-ການສອນ, ການຝຶກອົບຮົມຕ່າງໆ ລວມທັງກິດຈະກຳສາທາລະນະປະໂຫຍດ ຕາມແຜນການຂອງສະຖານອາຊີວະສຶກສາ;

3. ເຄົາລົບ, ປະຕິບັດຕາມລະບຽບພາຍໃນສະຖານອາຊີວະສຶກສາ, ຄຳສັ່ງສອນຂອງຄູສອນ, ຜູ້ບໍລິຫານ ແລະ ຜູ້ປົກຄອງ;

4. ປົກປັກຮັກສາ, ບົວລະບັດອາຄານ ສະຖານທີ່ ແລະ ນຳໃຊ້ວັດຖຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງຂອງສ່ວນລວມ ບໍ່ໃຫ້ເປ່ເພເສຍຫາຍ;

5. ຮ່ວມມື ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການຮຽນ, ການສຶກສາຄົ້ນຄວ້າ ແລະ ການຝຶກອົບຮົມ;

6. ຕ້ານສິ່ງຫຍໍ້ທໍ້ຕ່າງໆ ໃນສະຖານອາຊີວະສຶກສາ ແລະ ໃນສັງຄົມ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 (ປັບປຸງ) ການສົ່ງເສີມຜູ້ຮຽນວິຊາຊີບ**

ຜູ້ຮຽນວິຊາຊີບ ຈະໄດ້ຮັບການສົ່ງເສີມຍົກລະດັບການສຶກສາວິຊາຊີບຕໍ່ເນື່ອງ, ໄດ້ຮັບການຝຶກງານໃນອົງການຈັດຕັ້ງຂອງລັດ ແລະ ຫົວໜ່ວຍແຮງງານ, ໄດ້ຮັບໂອກາດໃນການຂະຫຍາຍຫົວຄິດປະດິດສ້າງ, ຮຽນຮູ້ເຕັກໂນໂລຊີໃໝ່, ໄດ້ຮັບການສົ່ງເສີມໃຫ້ມີວຽກເຮັດງານທຳ ແລະ ໄດ້ຮັບທຶນການສຶກສາ ຕາມວິຊາຊີບທີ່ລັດສົ່ງເສີມ.

ວິຊາຊີບທີ່ລັດສົ່ງເສີມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 63 (ປັບປຸງ) ການຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ດ້ອຍໂອກາດ ແລະ ຜູ້ຮຽນທີ່ມີບັນຫາ**

ຜູ້ດ້ອຍໂອກາດ ແລະ ຜູ້ຮຽນທີ່ມີບັນຫາ ຈະໄດ້ຮັບການຝຶກອົບຮົມວິຊາຊີບຕາມຄວາມເໝາະສົມເພື່ອໃຫ້ມີຄວາມສາມາດປະກອບອາຊີບ ຫຼື ມີວຽກເຮັດງານທຳ, ສ້າງລາຍຮັບໃຫ້ແກ່ຕົນເອງ ແລະ ຄອບຄົວ.

## ພາກທີ VII
## ພັນທະຕໍ່ອາຊີວະສຶກສາ

**ມາດຕາ 64 (ປັບປຸງ) ພັນທະຂອງສະຖານອາຊີວະສຶກສາ**

ສະຖານອາຊີວະສຶກສາ ມີພັນທະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງການຮຽນ-ການສອນ, ການຖ່າຍທອດຄວາມຮູ້, ຄວາມສາມາດ, ທັກສະວິຊາຊີບ ໃຫ້ຜູ້ຮຽນ, ສົ່ງເສີມຫົວຄິດປະດິດສ້າງ ແລະ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ສະມາຄົມພໍ່ແມ່ນັກຮຽນ ແລະ ຫົວໜ່ວຍແຮງງານ ເພື່ອສຶກສາອົບຮົມຜູ້ຮຽນໃຫ້ເປັນພົນລະເມືອງດີ, ມີວິຊາຊີບ, ມີວຽກເຮັດງານທຳ ພ້ອມທັງສະໜອງການບໍລິການດ້ານວິຊາການດ້ວຍຮູບແບບ ແລະ ວິທີການຕ່າງໆ ແກ່ສັງຄົມ ຫຼື ຊຸມຊົນຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

**ມາດຕາ 65 (ປັບປຸງ) ພັນທະຂອງຫົວໜ່ວຍແຮງງານ**

ຫົວໜ່ວຍແຮງງານ ມີພັນທະ ສົມທົບກັບສະຖານອາຊີວະສຶກສາ ໃນການຈັດຕັ້ງການຮຽນ-ການສອນ, ການຝຶກອົບຮົມ, ການຝຶກງານ, ການສ້າງມາດຕະຖານອາຊີບ, ຫຼັກສູດ, ການທົດສອບ, ການຖ່າຍທອດເຕັກ

ນິກ, ເຕັກໂນໂລຊີ ໃໝ່, ຮັບ ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ຝຶກງານ, ຜູ້ອອກແຮງງານຂອງຕົນ ແລະ ປະກອບທຶນເຂົ້າໃນການພັດທະນາວຽກງານອາຊີວະສຶກສາ.

**ມາດຕາ 66 ພັນທະຂອງພົນລະເມືອງລາວ ແລະ ສັງຄົມ**

ພົນລະເມືອງລາວ ຜູ້ບໍ່ມີວິຊາຊີບ ຫຼື ຜູ້ບໍ່ມີວຽກເຮັດງານທໍາ ມີພັນທະເຂົ້າຮຽນອາຊີວະສຶກສາ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ເພື່ອໃຫ້ມີຄວາມຮູ້, ຄວາມສາມາດ ແລະ ທັກສະວິຊາຊີບ ໃນສາຂາວິຊາຊີບໃດໜຶ່ງ.

ສັງຄົມ ມີພັນທະປະກອບສ່ວນເຂົ້າໃນການພັດທະນາວຽກງານອາຊີວະສຶກສາ ດ້ວຍຮູບການຕ່າງໆ ເຊັ່ນ ການປະກອບ ທຶນຮອນ, ວັດຖຸປະກອນ, ສະຕິປັນຍາ ແລະ ອື່ນໆ.

**ມາດຕາ 67 ພັນທະຂອງ ພໍ່ ແມ່ ຫຼື ຜູ້ປົກຄອງ**

ພໍ່ ແມ່ ຫຼື ຜູ້ປົກຄອງ ມີພັນທະສ້າງເງື່ອນໄຂ, ອໍານວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມຜູ້ຢູ່ໃຕ້ການດູແລ, ປົກຄອງ ຫຼື ຄຸ້ມຄອງຂອງຕົນ ໃຫ້ໄດ້ຮັບການຮຽນ ແລະ ຝຶກອົບຮົມວິຊາຊີບ.

## ພາກທີ VIII
## ການລົງທຶນໃສ່ອາຊີວະສຶກສາ

**ມາດຕາ 68 ການລົງທຶນຂອງລັດ**

ລັດ ລົງທຶນໃສ່ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ດ້ວຍການສະໜອງງົບປະມານ ເປັນຕົ້ນ ການກໍ່ສ້າງ ໂຄງລ່າງພື້ນຖານ, ອາຄານ ສະຖານທີ່, ພາຫະນະ, ວັດຖຸປະກອນ, ສື່ການຮຽນ-ການສອນ, ການຝຶກອົບຮົມ ແລະ ການສ້າງບຸກຄະລາກອນໃຫ້ເຂັ້ມແຂງ.

**ມາດຕາ 69 (ປັບປຸງ) ການລົງທຶນຂອງເອກະຊົນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃສ່ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ລວມທັງ ການສ້າງຕັ້ງສະຖານອາຊີວະສຶກສາ ຕ້ອງໃຫ້ຖືກຕ້ອງຕາມກົດໝາຍ, ມາດຕະຖານ, ເງື່ອນໄຂ ແລະ ຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາກໍານົດ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

ໃນການບໍລິການຈັດຕັ້ງການຮຽນ-ການສອນ, ການຝຶກອົບຮົມ ໃຫ້ແກ່ສັງຄົມ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງເອກະຊົນດັ່ງກ່າວ ໃຫ້ເກັບຄ່າຮຽນ ຕາມລະບຽບການ.

ຫົວໜ່ວຍແຮງງານທີ່ມີຄ່າໃຊ້ຈ່າຍໃນການຝຶກອົບຮົມ ແລະ ການຝຶກງານຂອງຜູ້ຮຽນວິຊາຊີບ ຈະໄດ້ຮັບນະໂຍບາຍສົ່ງເສີມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 70 (ໃໝ່) ກອງທຶນພັດທະນາອາຊີວະສຶກສາ**

ກອງທຶນພັດທະນາອາຊີວະສຶກສາ ແມ່ນ ກອງທຶນ ທີ່ສ້າງຂຶ້ນເພື່ອນໍາໃຊ້ເຂົ້າໃນການຈັດຕັ້ງການຮຽນ-ການສອນ, ການສົ່ງເສີມເບັ້ຍລ້ຽງໃຫ້ແກ່ຜູ້ດ້ອຍໂອກາດ, ຜູ້ທຸກຍາກ, ສົ່ງເສີມນະວັດຕະກໍາ ແລະ ສົ່ງເສີມກິດຈະກໍາອື່ນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 71 (ໃໝ່) ແຫຼ່ງກອງທຶນພັດທະນາອາຊີວະສຶກສາ**

ກອງທຶນພັດທະນາອາຊີວະສຶກສາໄດ້ມາຈາກແຫຼ່ງ ດັ່ງນີ້:

1. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;
2. ການເຄື່ອນໄຫວທາງດ້ານວິຊາການ ແລະ ການສ້າງກິດຈະກຳອື່ນ;
3. ການປະກອບສ່ວນຂອງລັດ.

**ມາດຕາ 72 (ໃໝ່) ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພັດທະນາອາຊີວະສຶກສາ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພັດທະນາອາຊີວະສຶກສາ ຕ້ອງຮັບປະກັນຄວາມໂປ່ງໃສ, ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ສາມາດກວດສອບໄດ້.

ສຳລັບລາຍລະອຽດການຄຸ້ມຄອງ ແລະ ນຳໃຊ້ ກອງທຶນພັດທະນາອາຊີວະສຶກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 73 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຸດຈະລິດໃນການຈັດຕັ້ງການຮຽນ-ການສອນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການທົດສອບ;
2. ເຄື່ອນໄຫວທີ່ເປັນການແຕະຕ້ອງເຖິງກຽດສັກສີ ຫຼື ບົດບາດຂອງ ບຸກຄະລາກອນ ແລະ ສະຖານອາຊີວະສຶກສາ;
3. ໂຄສະນາຊວນເຊື່ອ ກ່ຽວກັບວຽກງານອາຊີວະສຶກສາ ເກີນຄວາມເປັນຈິງ;
4. ບໍລິການສິ່ງມຶນເມົາ, ສິ່ງເສບຕິດ, ຫຼິ້ນການພະນັນທຸກປະເພດ, ບັນເທີງ ແລະ ສິ່ງສຽງດັງຢູ່ໃນບໍລິເວນ ແລະ ບ່ອນໃກ້ຄຽງ ສະຖານອາຊີວະສຶກສາ;
5. ປະພຶດໃນສິ່ງທີ່ບໍ່ຖືກຕ້ອງຕາມຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ;
6. ເຜີຍແຜ່ ສິ່ງລາມົກ ອະນາຈານ ພາຍໃນສະຖານອາຊີວະສຶກສາ;
7. ສ້າງກຸ່ມກ້ອນ, ພັກພວກ, ທ້ອງຖິ່ນ ເພື່ອແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນພາຍໃນສະຖານອາຊີວະສຶກສາ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 74 (ປັບປຸງ) ຂໍ້ຫ້າມສຳລັບຜູ້ບໍລິຫານ**

ຫ້າມຜູ້ບໍລິຫານອາຊີວະສຶກສາ ມີພຶດຕິກຳ ດັ່ງນີ້:

1. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງ ຖ່ວງດຶງ ເອກະສານ ກ່ຽວກັບວຽກງານອາຊີວະສຶກສາ;
2. ໃຫ້, ຮັບ, ທວງເອົາ, ຂໍເອົາ ສິນບົນ ຫຼື ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ຄອບຄົວ;
3. ໃຊ້ວາຈາຫຍາບຄາຍ, ໃຊ້ຄວາມຮຸນແຮງ, ນາບຂູ່ ຕໍ່ຜູ້ຮຽນ ແລະ ເພື່ອນຮ່ວມງານ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 75 (ປັບປຸງ) ຂໍ້ຫ້າມສຳລັບນັກວິຊາການ**

ຫ້າມນັກວິຊາການອາຊີວະສຶກສາ ມີພຶດຕິກຳ ດັ່ງນີ້:

1. ເມີນເສີຍຕໍ່ຄວາມຮັບຜິດຊອບໃນໜ້າທີ່ຂອງຕົນ;
2. ປະຕິບັດໜ້າທີ່ເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຮັບ, ທວງເອົາ, ຂໍເອົາ ສິນບົນ ຫຼື ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ຄອບຄົວ;
4. ໃຊ້ວາຈາຫຍາບຄາຍ, ໃຊ້ຄວາມຮຸນແຮງ, ນາບຂູ່ ຕໍ່ຜູ້ຮຽນ ແລະ ເພື່ອນຮ່ວມງານ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 76 (ປັບປຸງ) ຂໍ້ຫ້າມສຳລັບຄູສອນວິຊາຊີບ**

ຫ້າມຄູສອນວິຊາຊີບ ມີພຶດຕິກຳ ດັ່ງນີ້:

1. ສິດສອນບໍ່ໄປຕາມເນື້ອໃນຫຼັກສູດ;
2. ເລືອກປະຕິບັດ ຫຼື ລຳອຽງ ໃນການປະຕິບັດໜ້າທີ່ຂອງຕົນ;
3. ຮັບ, ທວງເອົາ, ຂໍເອົາ ສິນບົນ ຫຼື ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ຄອບຄົວ;
4. ໃຊ້ວາຈາຫຍາບຄາຍ, ໃຊ້ຄວາມຮຸນແຮງ, ນາບຂູ່ ຕໍ່ຜູ້ຮຽນ ແລະ ເພື່ອນຮ່ວມງານ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 77 (ປັບປຸງ) ຂໍ້ຫ້າມສຳລັບຜູ້ຮຽນວິຊາຊີບ**

ຫ້າມຜູ້ຮຽນວິຊາຊີບ ມີພຶດຕິກຳ ດັ່ງນີ້:

1. ລະເມີດລະບຽບວິໄນ ຂອງສະຖານອາຊີວະສຶກສາ ແລະ ຫົວໜ່ວຍແຮງງານ;
2. ພົວພັນກັບສິ່ງມຶນເມົາ, ສິ່ງລາມົກ ອະນາຈານ, ສິ່ງເສບຕິດທຸກປະເພດ ແລະ ຫຼິ້ນການພະນັນທຸກປະເພດພາຍໃນສະຖານອາຊີວະສຶກສາ ຫຼື ສະຖານທີ່ອື່ນ;
3. ໃຫ້ສິນບົນແກ່ ຜູ້ບໍລິຫານ, ນັກວິຊາການ ແລະ ຄູສອນວິຊາຊີບ;
4. ປະພຶດຕົນບໍ່ສຸພາບ, ຫຍາບຄາຍຕໍ່ ຜູ້ບໍລິຫານ, ນັກວິຊາການ, ຄູສອນວິຊາຊີບ ແລະ ເພື່ອນຮ່ວມຮຽນ;
5. ກໍ່ຄວາມວຸ້ນວາຍ ພາຍໃນສະຖານອາຊີວະສຶກສາ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ X
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 78 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;

2. ການແກ້ໄຂທາງດ້ານບໍລິຫານ;

3. ການແກ້ໄຂໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຕັດສິນຂອງສານ;

5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

**ມາດຕາ 79 ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານອາຊີວະສຶກສາ, ຄູ່ກໍລະນີສາມາດ ເຈລະຈາ, ປະນີປະນອມ ຫຼື ໄກ່ເກ່ຍກັນ.

**ມາດຕາ 80 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານອາຊີວະສຶກສາ, ຄູ່ກໍລະນີມີສິດສະເໜີ ຕໍ່ຂະແໜງການທີ່ກ່ຽວຂ້ອງເປັນຜູ້ແກ້ໄຂ.

**ມາດຕາ 81 ການແກ້ໄຂໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານອາຊີວະສຶກສາ, ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການຕົກລົງກັນ ເພື່ອພິຈາລະນາແກ້ໄຂ ຕາມກົດໝາຍ.

**ມາດຕາ 82 ການຕັດສິນຂອງສານ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານອາຊີວະສຶກສາ, ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 83 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບວຽກງານອາຊີວະສຶກສາ ທີ່ມີລັກສະນະສາກົນ, ຄູ່ກໍລະນີມີສິດສະເໜີຕໍ່ອົງການພາຍໃນ ຫຼື ຕ່າງປະເທດເພື່ອແກ້ໄຂຕາມກົດໝາຍ ຫຼື ຕາມສົນທິສັນຍາ ຫຼື ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ XI
## ສະພາທີ່ປຶກສາອາຊີວະສຶກສາ

**ມາດຕາ 84 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ສະພາທີ່ປຶກສາອາຊີວະສຶກສາ ແມ່ນ ການຈັດຕັ້ງ ທີ່ບໍ່ປະຈໍາການ, ມີພາລະບົດບາດໃນການຄົ້ນຄວ້າ ແລະ ໃຫ້ຄໍາປຶກສາ ກ່ຽວກັບນະໂຍບາຍ, ຍຸດທະສາດການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.

ສະພາທີ່ປຶກສາອາຊີວະສຶກສາ ປະກອບດ້ວຍ ສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ແລະ ສະພາທີ່ປຶກສາອາຊີວະສຶກສາ ຂັ້ນແຂວງ ຖ້າຫາກມີການສ້າງຕັ້ງ.

**ມາດຕາ 85 (ປັບປຸງ) ສິດ ແລະ ໜ້າທີ່**

ສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ຮ່າງ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ໂຄງການ ແລະ ກອງທຶນພັດທະນາອາຊີວະສຶກສາ;

2. ປະກອບຄຳເຫັນ ຕໍ່ຮ່າງນິຕິກຳກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ເປັນຕົ້ນ ສາລະບານອາຊີບ, ມາດຕະຖານອາຊີບ ແລະ ການທົດສອບ;

3. ປະກອບຄຳເຫັນ ຕໍ່ຮ່າງລະບຽບການ ການປະສານງານ ແລະ ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ໃນການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

4. ຄົ້ນຄວ້າ, ສ້າງຕັ້ງ ແລະ ຍຸບເລີກ ໜ່ວຍງານກຸ່ມອາຊີບ ແລະ ກອງເລຂາ ຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 86 (ປັບປຸງ) ໂຄງປະກອບ**

ສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີຊຶ່ງປະກອບດ້ວຍ:

1. ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2. ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
3. ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນຮອງປະທານ;
4. ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
5. ຫົວໜ້າຫ້ອງການ ຫຼື ຫົວໜ້າກົມ ຂອງກະຊວງທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເປັນກຳມະການ;
6. ປະທານສະມາຄົມຫຼື ຫົວໜ້າໜ່ວຍງານກຸ່ມອາຊີບທີ່ກ່ຽວຂ້ອງ ເປັນກຳມະການ;
7. ຜູ້ຊ່ຽວຊານສະເພາະດ້ານ ຈຳນວນໜຶ່ງ ເປັນກຳມະການ;
8. ຜູ້ຕາງໜ້າສະຖານອາຊີວະສຶກສາ ຈຳນວນໜຶ່ງ ເປັນກຳມະການ.

ສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ມີຫ້ອງການສະພາທີ່ປຶກສາອາຊີວະສຶກສາ ປະຈຳຢູ່ກະຊວງສຶກສາທິການ ແລະ ກິລາ ຊຶ່ງເຮັດໜ້າທີ່ເປັນກອງເລຂາ ຖືກແຕ່ງຕັ້ງໂດຍ ປະທານສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ.

ໃນກໍລະນີທີ່ມີຄວາມຈຳເປັນ ອາດສ້າງຕັ້ງສະພາທີ່ປຶກສາອາຊີວະສຶກສາຂັ້ນແຂວງ ຕາມການເຫັນດີ ຂອງປະທານສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ. ສຳລັບ ໂຄງປະກອບ, ສິດ ແລະ ໜ້າທີ່ ຂອງສະພາທີ່ປຶກສາອາຊີວະສຶກສາ ຂັ້ນແຂວງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ກຳນົດ.

# ພາກທີ XII
# ການຄຸ້ມຄອງ ແລະ ການກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານອາຊີວະສຶກສາ

**ມາດຕາ 87 (ປັບປຸງ) ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານອາຊີວະສຶກສາ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານອາຊີວະສຶກສາ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ.
4. ຄະນະພັດທະນາການສຶກສາຂັ້ນບ້ານ.

**ມາດຕາ 88 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງວຽກງານອາຊີວະສຶກສາ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ໂຄງການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານອາຊີວະສຶກສາ ໃຫ້ເປັນລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃນຂອບເຂດທົ່ວປະເທດ;
4. ຊີ້ນຳ ການສ້າງ ແລະ ຄຸ້ມຄອງ ລະບົບຖານຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
5. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
6. ຊີ້ນຳ ການສ້າງສາລະບານອາຊີບ, ມາດຕະຖານອາຊີບ, ການທົດສອບທັກສະວິຊາຊີບ;
7. ປະສານສົມທົບກັບຫົວໜ່ວຍແຮງງານ ໃນການຮັບຜູ້ຮຽນຈົບວິຊາຊີບ ເພື່ອໃຫ້ມີວຽກເຮັດງານທຳ;
8. ປະສານສົມທົບກັບ ກະຊວງ, ອົງການອື່ນ ໃນການຄຸ້ມຄອງວຽກງານອາຊີວະສຶກສາ;
9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບວຽກງານອາຊີວະສຶກສາ ຕາມກົດໝາຍ;
10. ຊີ້ນຳ ການສ້າງມາດຕະຖານການປະເມີນຜົນ ແລະ ອະນຸມັດການນຳໃຊ້ໂຄງການຫຼັກສູດອາຊີວະສຶກສາທຸກລະດັບ;
11. ອະນຸຍາດສ້າງຕັ້ງ ແລະ ຍຸບເລີກ ສະຖານອາຊີວະສຶກສາ;
12. ຊີ້ນຳ ການສ້າງ, ບຳລຸງ, ຍົກລະດັບ ຄູສອນວິຊາຊີບ ແລະ ບຸກຄະລາກອນອາຊີວະສຶກສາ;

13. ຊີ້ນຳ ການສ້າງແຜນການ ແລະ ຈັດຕັ້ງການແຂ່ງຂັນທັກສະວິຊາຊີບລະດັບພາກ ແລະ ລະດັບຊາດ;

14. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

15. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານກ່ຽວກັບອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 89 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານອາຊີວະສຶກສາ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ໂຄງການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການ ຂອງຕົນ;

2. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

4. ສ້າງ ແລະ ຄຸ້ມຄອງ ລະບົບຖານຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

5. ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

6. ປະສານສົມທົບກັບຫົວໜ່ວຍແຮງງານ ໃນການຮັບຜູ້ຮຽນຈົບວິຊາຊີບ ເພື່ອໃຫ້ມີວຽກເຮັດງານທຳ;

7. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;

8. ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ ການປະຕິບັດມາດຕະຖານການປະເມີນຜົນ ແລະ ການນຳໃຊ້ໂຄງການຫຼັກສູດອາຊີວະສຶກສາ;

9. ປະສານສົມທົບກັບ ພະແນກການ, ອົງການອື່ນ ໃນການຄຸ້ມຄອງວຽກງານອາຊີວະສຶກສາ;

10. ສະເໜີ ສ້າງຕັ້ງ ແລະ ຍຸບເລີກ ສະຖານອາຊີວະສຶກສາ;

11. ສະເໜີສ້າງ, ບຳລຸງ, ຍົກລະດັບ ຄູສອນວິຊາຊີບ ແລະ ບຸກຄະລາກອນອາຊີວະສຶກສາ;

12. ສ້າງແຜນການ ແລະ ຈັດຕັ້ງການແຂ່ງຂັນທັກສະວິຊາຊີບ ລະດັບສະຖານອາຊີວະສຶກສາ;

13. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຕາມການມອບໝາຍ;

14. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານກ່ຽວກັບອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຕໍ່ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 90 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານອາຊີວະສຶກສາ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການພັດທະນາອາຊີ ວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
3. ສ້າງ ແລະ ຄຸ້ມຄອງ ລະບົບຖານຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
4. ປະສານສົມທົບກັບຫົວໜ່ວຍແຮງງານ ໃນການຮັບຜູ້ຮຽນຈົບວິຊາຊີບ ເພື່ອໃຫ້ມີວຽກເຮັດງານທໍາ;
5. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
6. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ ບຸກຄະລາກອນອາຊີວະສຶກສາ ຕໍ່ຂັ້ນເທິງຂອງຕົນ;
7. ປະສານສົມທົບກັບ ຫ້ອງການຂັ້ນເມືອງ, ອົງການອື່ນ ໃນການຄຸ້ມຄອງວຽກງານອາຊີວະສຶກສາ;
8. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານກ່ຽວກັບອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຕໍ່ພະແນກສຶກສາທິການ ແລະ ກິລາ, ອົງການປົກຄອງ ເມືອງ, ເທດສະບານ ແລະ ນະຄອນ ຢ່າງເປັນປົກກະຕິ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 91 (ໃໝ່) ສິດ ແລະ ໜ້າທີ່ ຂອງ ຄະນະພັດທະນາການສຶກສາຂັ້ນບ້ານ**

ໃນການຄຸ້ມຄອງວຽກງານອາຊີວະສຶກສາ ຄະນະພັດທະນາການສຶກສາຂັ້ນບ້ານມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
2. ປຸກລະດົມ, ຂົນຂວາຍ ປະຊາຊົນ ທີ່ບໍ່ມີວິຊາຊີບ ໂດຍສະເພາະຊາວໜຸ່ມພາຍໃນບ້ານ ໃຫ້ຮູ້ຄວາມສໍາຄັນຂອງວຽກງານອາຊີວະສຶກສາ ແລະ ໃຫ້ໄດ້ຮັບການຝຶກອົບຮົມວິຊາຊີບ;
3. ເກັບກໍາ ແລະ ສະໜອງຂໍ້ມູນ ກ່ຽວກັບຄວາມຕ້ອງການຝຶກອົບຮົມວິຊາຊີບ ເຊັ່ນ ການສ້ອມແປງເຄື່ອງຈັກ, ປຸງແຕ່ງອາຫານ, ປູກຝັງ, ລ້ຽງສັດ, ຕັດຫຍິບ ໃຫ້ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ;
4. ປະສານສົມທົບກັບຫົວໜ່ວຍແຮງງານພາຍໃນບ້ານ ຮັບເອົາຜູ້ຮຽນຈົບວິຊາຊີບ ໃຫ້ມີວຽກເຮັດງານທໍາ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 92 (ປັບປຸງ) ສິດ ແລະ ໜ້າທີ່ຂອງພາກສ່ວນອື່ນ**

ບັນດາຂະແໜງການ, ອົງການ ລວມທັງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສຶກສາທິການ ແລະ ກິລາ ໃນການຄຸ້ມຄອງ ແລະ ພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານອາຊີວະສຶກສາ

**ມາດຕາ 93 (ປັບປຸງ) ອົງການກວດກາ**

ອົງການກວດກາວຽກງານອາຊີວະສຶກສາ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານອາຊີວະສຶກສາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 94 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານ ອາຊີວະສຶກສາ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
2. ການປະຕິບັດແຜນການ, ແຜນງານ, ໂຄງການ, ເນື້ອໃນຫຼັກສູດ ແລະ ວິທີການສິດສອນ, ການສອບເສັງ, ການທົດສອບທັກສະວິຊາຊີບ, ການອອກປະກາສະນິຍະບັດ ແລະ ໃບຢັ້ງຢືນ;
3. ຄຸນນະພາບ ແລະ ການບໍລິຫານ ຂອງສະຖານອາຊີວະສຶກສາ.

**ມາດຕາ 95 ຮູບການການກວດກາ**

ການກວດກາວຽກງານອາຊີວະສຶກສາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດການັ້ນ ເຈົ້າໜ້າທີ່ກວດກາຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 96 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ ແລະ ດຳເນີນວຽກງານອາຊີວະສຶກສາ ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ຢ່າງມີປະສິດທິຜົນນັ້ນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 97 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ XIV
## ບົດບັນຍັດສຸດທ້າຍ

**ມາດຕາ 98 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 99 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍອາຊີວະສຶກສາ ສະບັບເລກທີ 42/ສພຊ, ລົງວັນທີ 23 ທັນວາ 2013.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້